ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 22 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 26. 9. 2012.

ກະຊວງ ກະສິກຳ-ປ່າໄມ້
ຂາເຂົ້າ
ເລກທີ 3918
ວັນທີ 26. 9. 12
ເວລາ..............

# ຄຳສັ່ງ

ຂອງນາຍົກລັດຖະມົນຕີ ກ່ຽວກັບການແນະນຳປະຕິບັດ
ຂໍ້ທີ 10.1 ຂອງຂໍ້ຕົກລົງ ສະບັບເລກທີ 32/ນຍ, ລົງວັນທີ 6 ມີນາ 2012

ເຖິງ: ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການລັດຖະບານ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນຂອບເຂດທົ່ວປະເທດ.

- ອີງຕາມ ໝວດທີ IV, ມາດຕາ12 ( ໃໝ່ ), ຂໍ້ທີ 8, ຂອງກົດໝາຍວ່າດ້ວຍລັດຖະບານ ລະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.

- ອີງຕາມ ຂໍ້ທີ 10.1, ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 32/ນຍ, ລົງວັນທີ 06 ມີນາ 2012 ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ ຄັ້ງວັນທີ 25-26 ມັງກອນ 2012.

ເນື່ອງຈາກວ່າການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ ໃນໄລຍະຜ່ານມາຍັງມີບາງຂະແໜງການ ແລະ ທ້ອງຖິ່ນເຂົ້າໃຈເນື້ອໃນ ຂໍ້ທີ 10.1 ວ່າຕ້ອງໃຫ້ປັບປຸງຄຳສັ່ງ ສະບັບເລກທີ 17/ນຍ, ລົງວັນທີ 22 ກັນຍາ 2006 ກ່ອນ ຈິ່ງລົບລ້າງຄຳສັ່ງເພີ່ມເຕີມ ສະບັບເລກທີ 09/ນຍ, ລົງວັນທີ 02 ພຶດສະພາ 2008 ແລະ ຂໍ້ຕົກລົງ ສະບັບເລກທີ 23/ນຍ, ລົງວັນທີ 24 ກຸມພາ 2009 ບາງພາກສ່ວນກໍ່ຍັງສືບຕໍ່ສະເໜີ ແລະ ປະຕິບັດ ຕາມຄຳສັ່ງເພີ່ມເຕີມ ສະບັບເລກທີ 09/ນຍ, ແລະ ຂໍ້ຕົກລົງ ສະບັບເລກທີ 23/ນຍ, ຊຶ່ງເຫັນວ່າເປັນຄວາມເຂົ້າໃຈ ແລະ ປະຕິບັດບໍ່ຖືກຕ້ອງ.

ເພື່ອໃຫ້ບັນດາກະຊວງ ແລະ ອົງການກ່ຽວຂ້ອງຂອງລັດຖະບານ ກໍ່ຄືອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໄດ້ຈັດຕັ້ງປະຕິບັດເນື້ອໃນຂໍ້ທີ 10.1 ຂອງຂໍ້ຕົກລົງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 32/ນຍ ລົງວັນທີ 06 ມີນາ 2012 ວ່າດ້ວຍການຮັບຮອງເອົາມະຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ ຄັ້ງວັນທີ 25-26 ມັງກອນ 2012 ມີຄວາມເປັນເອກະພາບ ແລະ ມີຄວາມສັກສິດ

## ນາຍົກລັດຖະມົນຕີ ອອກຄຳສັ່ງ :

1/. ລົບລ້າງຄຳສັ່ງເພີ່ມເຕີມ ສະບັບເລກທີ 09/ນຍ, ລົງວັນທີ 02 ພຶດສະພາ 2008 ວ່າດ້ວຍການແກ້ໄຂບັນຫາໄມ້ຢືດ, ໄມ້ຮິບໂຮມ ແລະ ໄມ້ເນື້ອອ່ອນທີ່ຄົງຄ້າງ ແລະ ຂໍ້ຕົກລົງ ສະບັບເລກທີ 23/ນຍ, ລົງວັນທີ 24 ກຸມພາ 2009 ວ່າດ້ວຍການອະນຸຍາດໃຫ້ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ສົ່ງໄມ້ແປຮູບທີ່ເປັນໄມ້ຄຸ້ມຄອງ 1,2,3 ແລະ ຕໍໄມ້ອອກຕ່າງປະເທດ, ນັບແຕ່ນີ້ຂໍ້ຕົກລົງ ສະບັບເລກທີ 32/ນຍ ມີຜົນສັກສິດເປັນຕົ້ນ

ໄປ ໝາຍຄວາມວ່າ ຂໍ້ຕົກລົງ ສະບັບເລກທີ 32/ນຍ ໄດ້ລົບລ້າງນິຕິກຳ 2 ສະບັບດັ່ງກ່າວຢ່າງສິ້ນເຊີງ ແລະ ຖື ວ່ານິຕິກຳ 2 ສະບັບດັ່ງກ່າວບໍ່ມີຜົນສັກສິດແລ້ວ.

2/. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮີບຮ້ອນຄົ້ນຄວ້າປັບປຸງ ບາງຈຸດທີ່ບໍ່ທັນຮັດກຸມໃນຄຳສັ່ງ ສະບັບເລກທີ 17/ນຍ, ລົງວັນທີ 22/09/2008 ໃຫ້ສອດຄ່ອງກັບກົດໝາຍ ແລະ ນິຕິກຳກ່ຽວຂ້ອງ ແລະ ສະພາບຄວາມເປັນຈິງເພື່ອໃຫ້ໄດ້ປະກາດໃຊ້ໂດຍໄວ.

3/. ໃຫ້ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການລັດຖະບານ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນຂອບເຂດທົ່ວປະເທດ ເປັນເຈົ້າການໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ ຢ່າງເຂັ້ມງວດ ແລະ ດ້ວຍຄວາມຮັບຜິດຊອບສູງ.

4/. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ